# ຄິດຮອດຈຳປາເມືອງລາວ

ດວງມາລາຄູ່ບ້ານ　　ຫອມກິ່ນໂຊຍໄກ
ຢູ່ໃນໃຈຂອງຮຽມ　　ຕັ້ງແຕ່ເຍົາຍັງນ້ອຍ
ຄອຍເບິ່ງຕາມແຄມຮົ້ວ　　ມາລາບານງາມສງ່າ
ດວງຈຳປາບ້ານຂ້ອຍ　　ຫອມກົ້ວກິ່ນບໍ່ວາຍ

ຈຳປາລາວເປັນດອກໄມ້　　ຄິງຄຸ່ມຄ່າມະຫາສານ
ຈຸມຈໍ່ບານເຮົາເກັບ　　ໄວ້ແຕ່ງຂັນບູຊາໄຫ້
ຍາມສົງການນຳມາເອ້　　ເຫນັບແຊມຫູປັກໃສ່
ສາວຮ້ອຍເປັນມາລັຍ　　ຄ້ອງຄໍຊາຍຮູບໂກ້　　ຜູ້ຫມາຍຊ້ອນຄູ່ກັນ

ແມ່ນວ່າ　ຮຽມໄດ້ພັດພາກບ້ານ　　ຕົກມາຢູ່ແດນໄກ　ກໍຈິງແລ້ວ
ເຫັນຈຳປາຍາມໃດ　　ຮ່ຳຄະນຶງເຖິງບ້ານ
ຫົວໃຈບານບໍ່ມີເສົ້າ　　ເຫງົາໃນໃຈກໍຫາຍຊ່ວງ
ຢືນລັດສາຍລົມລ່ວງ　　ດວງຈຳປາສົ່ງກິ່ນກົ້ວ　　ໄດ້ຫົວຍິ້ມຊື່ນໃຈ

ແຕ່ວ່າ　ຄິດຂຶ້ນມາພັດດູຮ້າຍ　　ພາໃຈຮ່ຳຮອນວິຕົກ
ກົກຈຳປາຈຳນວນຫຼາຍ　　ສົ່ງຂ້າມໄທເປັນສິນຄ້າ
ເອີ້ນວ່າ ເຣລາວະດີ ຕົ້ນ　　ປວງຊົນໄທເຂົາປ່ຽນຊື່
ຄິດໄປຫຼາຍພັດແຫ່ງຄື　　ການທຳລາຍຮາກເຫງົ້າ　　ໃຫ້ເຂົາໂຄ່ນລົ້ມທະລາຍ

ຍ້ອນຈຳປາເປັນດອກໄມ້　　ປະຈຳຊາຕຂອງລາວເຮົາ
ຈຳປາຂາວຫຼືແດງ　　ເປັນທີ່ແພງສງວນຫ້າມ
ໃຜຜູ່ທຳການຄ້າ　　ຂຸດໄປຂາຍຖອນຮາກ
ຫຼືຖາກຖາງກິ່ນກູ້　　ທຳລາຍຖິ້ມແມ່ນບໍ່ຄວນ　　ແທ້ໃດ

ຄົນລາວ    ຈິ່ງໄດ້ຄິດຖີ່ຖ້ວນ    ຄວາມໝາຍຊາຕມີເຫຼືອຫຼາຍ

ເກີດຢູ່ໃນດິນຈຳປາ    ຈິ່ງຮັກສາຖນອມໄວ້

ໃຫ້ມາລາຄວນບ້ານ    ເຮືອງບານສະພັ້ງງ່າ

ໃຫ້ຈຳປາເມືອງລ້ານຊ້າງ    ຍັງມີແນວເອກອ້າງ    ຈຳປານັ້ນເປັນຄູ່ເມືອງ

ໂດຍ: ບ່າວຫັກເຈັດ